# ການເຊື້ອເຊີນໃຫ້ສົ່ງບົດເລື່ອງ: ນັກເຄື່ອນໄຫວໃນເຂດຊົນນະບົດ ແລະ ໃນເມືອງທີ່ປ່ຽນແປງຊີວິດຂອງແມ່ຍິງໃນ ສປປ ລາວ



**ຫົວຂໍ້**: 'ເຖິງເວລາແລ້ວ: ນັກເຄື່ອນໄຫວໃນເຂດຊົນນະບົດ ແລະ ໃນເມືອງທີ່ປ່ຽນແປງຊີວິດຂອງແມ່ຍິງ'

**ກຳນົດເວລາ**ສົ່ງ: 25 ມີນາ 2018

**ເປີດໃຫ້:** ນັກຂ່າວ, ນັກສຶກສາຂະແໜງສື່ສານມວນຊົນ ຢູ່ ສປປ ລາວ

ເນື່ອງໃນໂອກາດວັນແມ່ຍິງສາກົນ 2018, ອົງການ UNESCO ປະຈຳບາງກອກ ປະເທດໄທ ເຊື້ອເຊີນໃຫ້ນັກຂ່າວ ແລະ ນັກສຶກສາຂະແໜງສື່ສານມວນຊົນໃນ ສປປ ລາວ ຊ່ວຍສ່ອງແສງນັກເຄື່ອນໄຫວໃນເຂດຊົນນະບົດ ແລະ ໃນເມືອງ ທີ່ໄດ້ປ່ຽນແປງຊີວິດຂອງແມ່ຍິງ.

ຄະນະກຳມະການຂອງອົງການ UNESCO ຈະຄັດເລືອກສາມເລື່ອງ ແລະ ຈະນຳສະເໜີເລື່ອງດັ່ງກ່າວລົງໃນເວັບໄຊຂອງອົງການ UNESCO ບາງກອກ ແລະ ນັກຂຽນທັງສາມຈະຖືກເຊື້ອເຊີນເຂົ້າຮ່ວມການສະເຫຼີມສະຫຼອງ ວັນເສລີພາບຂ່າວສານໂລກ ຫຼື World Press Freedom Day ໃນວັນທີ 3 ພຶດສະພາ ທີ່ບາງກອກ, ປະເທດໄທ. (ທາງອົງການ UNESCO ຈະຮັບຜິດຊອບຄ່າເດີນທາງ, ຄ່າພັກເຊົ່າ ແລະ ຄ່າອາຫານໃຫ້ຜູ້ເຂົ້າຮ່ວມ).

ສຳລັບອົງການ UNESCO, ບົດບາດຍິງຊາຍເປັນຫຼັກການດ້ານສິດທິມະນຸດ ເຊິ່ງເປັນເງື່ອນໄຂເບື້ອງຕົ້ນໃນການພັດທະນາທີ່ແນໃສ່ບຸກຄົນແບບຍືນຍົງ, ແລະ ເປັນເປົ້າໝາຍໃນຕົວ. ດ້ວຍການສ່ອງແສງລົງໃນບົດເລື່ອງດັ່ງກ່າວ, ອົງການ UNESCO ມີເປົ້າໝາຍໃນການປູກຈິດສຳນຶກກ່ຽວກັບບົດບາດຍິງຊາຍ ແລະ ສົ່ງເສີມການຮັບຮູ້ແມ່ຍິງ ແລະ ເປັນກະບອກສຽງໃຫ້ແມ່ຍິງໃນສື່ມວນຊົນ. ຫົວຂໍ້ຂອງການແຂ່ງຂັນຄັ້ງນີ້ ແມ່ນມີຄວາມສອດຄ່ອງກັບການສະເຫຼີມສະຫຼອງວັນແມ່ຍິງສາກົນຂອງປີນີ້, "ເຖິງເວລາແລ້ວ: ນັກເຄື່ອນໄຫວໃນເຂດຊົນນະບົດ ແລະ ໃນເມືອງທີ່ປ່ຽນແປງຊີວິດຂອງແມ່ຍິງ".

ລັດຖະບານຂອງ ສປປ ລາວ ໄດ້ເຊັນ ສົນທິສັນຍາວ່າດ້ວຍການລົບລ້າງການຈຳແນກຕໍ່ແມ່ຍິງ ໃນປີ 1981. ອີງຕາມອົງການເພື່ອແມ່ຍິງຂອງສະຫະປະຊາຊາດ, "ສິ່ງທ້າທາຍຫຼັກຕໍ່ບົດບາດຍິງຊາຍໃນ ສປປ ລາວ ຄືໃຫ້ແມ່ຍິງ ແລະ ເດັກຍິງສາມາດເຂົ້າເຖິງກາລະໂອກາດ ແລະ ຊັບພະຍາກອນເທົ່າທຽມກັບຜູ້ຊາຍ, ໂດຍສະເພາະແມ່ຍິງໃນເຂດຊົນນະບົດ ແລະ ແມ່ຍິງທີ່ດ້ອຍໂອກາດ. ການບໍ່ຮູ້ໜັງສື, ສຸຂະພາບການຈະເລີນພັນທີ່ບໍ່ແຂງແຮງ, ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ການບໍ່ມີສ່ວນຮ່ວມໃນຂົງເຂດເສດຖະກິດ ເປັນບູລິມະສິດສູງສຸດໃນການພັດທະນາສຳລັບແມ່ຍິງ."

ແມ່ຍິງມີບົດບາດສຳຄັນໃນສັງຄົມລາວ, ແຕ່ສ່ວນໃຫຍ່ຈະຢູ່ໃນຂະແໜງການທີ່ບໍ່ເປັນທາງການ ແລະ ບົດບາດຂອງເຂົາເຈົ້າຈະບໍ່ເປັນທີ່ຍອມຮັບໃນສັງຄົມ.

ວັນແມ່ຍິງສາກົນ 2018 ເປັນໂອກາດສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນທຸກສະພາວະ, ຢູ່ເຂດຊົນນະບົດ ແລະໃນເມືອງ, ແລະ ເລັ່ງການເຄື່ອນໄຫວທົ່ວໄປສຳລັບສິດທິແມ່ຍິງ, ຄວາມເປັນເອກະພາບ ແລະ ຄວາມຍຸດທິທຳທົ່ວໂລກ.

**ລາຍລະອຽດການສົ່ງບົດເລື່ອງ:**

ບົດເລື່ອງຕ້ອງສອດຄ່ອງກັບຄວາມຕ້ອງການດັ່ງນີ້:

- ບົດເລື່ອງຕ້ອງຂຽນເປັນພາສາອັງກິດ ຫຼື ພາສາລາວ; ການສົ່ງບົດເລື່ອງເປັນພາສາອັງກິດແມ່ນຕ້ອງຂຽນ **ລະຫວ່າງ 400 ຫາ 800 ຄຳ**.
- **ຄັດເລືອກເລື່ອງດ່ຽວທີ່ເປັນເອກະລັກແລະຕອບໂຈດຂອງຫົວຂໍ້**, ເຊິ່ງສະແດງໃຫ້ເຫັນນັກເຄື່ອນໄຫວໃນເຂດຊົນນະບົດ ແລະ/ຫຼື ໃນເມືອງທີ່ປ່ຽນແປງຊີວິດຂອງແມ່ຍິງໃນ ສປປ ລາວ. ອາດຈະໝາຍເຖິງ ຜູ້ຊາຍ ຫຼື ແມ່ຍິງທີ່ເຮັດວຽກເພື່ອຊ່ວຍເຫຼືອແມ່ຍິງໃນການອ້າງສິດຂອງຕົນ / ຮູ້ເຖິງສັກກະຍາພາບຂອງຕົນ, ຜູ້ທີ່ເຮັດວຽກກ່ຽວກັບການເຂົ້າເຖິງກາລະໂອກາດ ແລະ ຊັບພະຍາກອນທີ່ເທົ່າທຽມກັບຜູ້ຊາຍ.
- ທ່ານສາມາດແຕ່ງເລື່ອງໃນຮູບແບບທີ່ທ່ານຕ້ອງການ: ທ່ານສາມາດແຕ່ງເປັນບົດຄວາມ, ເປັນຊີວະປະຫວັດ, ເປັນບົດສົນທະນາ, ເປັນກາບກອນ, ຫຼື ເປັນນິທານກໍ່ໄດ້. ໃຫ້ທ່ານໃຊ້ຄວາມຄິດສ້າງສັນ; ແຕ່ງເລື່ອງທີ່ອ່ານງ່າຍສາມາດດຶງດູດຄວາມສົນໃຈຂອງຜູ້ອ່ານໃນເລື່ອງຂອງຊີວິດແມ່ຍິງໃນ ສປປ ລາວ.

**ການສະໝັກ:**

ທຸກການສະໝັກ ແລະ ບົດເລື່ອງແມ່ນຕ້ອງໄດ້ສົ່ງກ່ອນວັນທີ 25 ມີນາ ໂດຍແຈ້ງລາຍລະອຽດການຕິດຕໍ່ຜູ້ຂຽນທີ່ ci.bgk@unesco.org ຫຼື ຜ່ານເວັບໄຊ: https://docs.google.com/forms/d/e/1FAIpQLSf7XAWFZNLplotvt0xBAg4bjagp5kFQUL0BlifnlSjyfBUCYg/viewform?c=0&w=1

ຖ້າທ່ານມີຄຳຖາມເພີ່ມເຕີມ, ສາມາດຕິດຕໍ່ອົງການ UNESCO ບາງກອກ ທີ່ ci.bgk@unesco.org